# ຫົວຂໍ້: ວິທະຍຸຊຸມຊົນ ແລະ ພະຍາດໂຄວິດ-19: ເລື່ອງຈິງຄົນແທ້ກ່ຽວກັບການສະໜັບສະໜຸນການສຶກສາຂອງແມ່ຍິງ ຢູ່ປະເທດລາວ



ຄໍາບັນຍາຍຮູບພາບ: ອາສາສະໝັກວິທະຍຸຊຸມຊົນ ຢູ່ເມືອງຮຸນ ສົນທະນາກ່ຽວກັບບັນທັດຖານ ບົດບາດຍິງ-ຊາຍ ໃນລະຫວ່າງການຝຶກອົບຮົມ.

ຢູ່ເມືອງນາກາຍ ທີ່ຢູ່ພາກກາງຂອງປະເທດລາວ ເຊິ່ງມີຊື່ສຽງທາງດ້ານປ່າໄມ້ທີ່ຂຽວງາມ ແລະ ອຸດົມສົມບູນໄປດ້ວຍຊີວະນາໆພັນ, ຄູ ພັນ ອາຍຸ 26 ປີ ໄດ້ສະທ້ອນໃຫ້ເຫັນປະສົບການການຮຽນຮູ້ຜ່ານລະບົບອອນລາຍຂອງນັກຮຽນຂອງລາວ ໃນລະຫວ່າງການລະບາດຂອງພະຍາດໂຄວິດ-19:

“ນັກຮຽນຈໍານວນໜຶ່ງຂອງຂ້າພະເຈົ້າ ບໍ່ສາມາດເຂົ້າຮ່ວມການຮຽນຜ່ານລະບົບອອນລາຍໄດ້ ເພາະວ່າພວກເຂົາບໍ່ມີອຸປະກອນອໍານວຍຄວາມສະດວກທີ່ເໝາະສົມ. ສໍາລັບຜູ້ທີ່ມີ, ພວກເຂົາກໍມັກຈະບໍ່ຈົດຈໍ່ກັບການຮຽນ.”

ຄືກັບຄູຫຼາຍຄົນໃນໄລຍະການລະບາດຂອງພະຍາດໂຄວິດ-19, ນາງ ພັນ ໄດ້ອຸທິດເຫື່ອແຮງຂອງຕົນຢ່າງເຕັມທີ່ ເພື່ອຮັບປະກັນວ່າ ນັກຮຽນຂອງລາວ ສາມາດສືບຕໍ່ການຮຽນຂອງພວກເຂົາ ເຖິງແມ່ນວ່າຈະມີການປິດໂຮງຮຽນເປັນບາງໄລຍະ ແລະ ດົນນານ. ລາວໄດ້ສັງເກດເຫັນວ່າ ສິ່ງທ້າທາຍແມ່ນມີຫຼາຍຂຶ້ນ ສຳລັບນັກຮຽນທີ່ພົບພໍ້ກັບຄວາມບອບບາງອື່ນໆ ທາງດ້ານສັງຄົມ ເຊິ່ງລວມທັງຜູ້ທີ່ມາຈາກຊົນເຜົ່າສ່ວນນ້ອຍທີ່ມີພາສາປາກເວົ້າເປັນຂອງຕົນເອງ. ນາງ ພັນ ເຊິ່ງເປັນສະມາຊິກຄົນໜຶ່ງຂອງກຸ່ມຊົນເຜົ່າມະກອງ ໄດ້ສັງເກດວ່າ:

"ທຸກໆຄົນມີສິດເທົ່າທຽມກັນທາງດ້ານການສຶກສາ ແລະ ການພັດທະນາ ເຊິ່ງລວມທັງ ຄົນຊົນເຜົ່າ; ເຖິງຢ່າງໃດກໍຕາມ, ຄົນຊົນເຜົ່າມັກຈະຖືກດູໝິ່ນປະມາດ ເຊິ່ງສົ່ງຜົນໃຫ້ພວກເຂົາຮູ້ສຶກບໍ່ໝັ້ນໃຈທີ່ຈະເຂົ້າຮ່ວມການຮຽນຮູ້"

ຜົນການສຶກສາຂອງອົງການ UNESCO ແລະ UNICEF ປີ 2021 ກ່ຽວກັບຜົນກະທົບ ແລະ ການຕອບໂຕ້ກັບພະຍາດໂຄວິດ-19 ຕໍ່ກັບຂະແໜງການສຶກສາ ຢູ່ ສປປ ລາວ ໄດ້ສ່ອງແສງຄວາມເປັນຈິງຂອງປະສົບການຂອງນາງ ພັນ ທີ່ວ່າ ກຸ່ມຄົນທີ່ໄດ້ຮັບຜົນກະທົບຈາກການຢຸດສະຫງັກທາງດ້ານການສຶກສາ ແມ່ນກຸ່ມຄົນທີ່ມີຄວາມບອບບາງທີ່ສຸດໃນສັງຄົມ. ກຸ່ມຄົນເຫຼົ່ານີ້ແມ່ນລວມມີ ຜູ້ທີ່ອາໄສຢູ່ເຂດຫ່າງໄກສອກ, ເດັກນ້ອຍທີ່ມີຄວາມພິການ, ກຸ່ມຊົນເຜົ່າ ແລະ ໂດດເດັ່ນທີ່ສຸດ ແມ່ນ ເດັກຍິງ ແລະ ໄວໜຸ່ມຍິງຄືດັ່ງ ນາງ ພັນ. ໃນບົດບາດທີ່ເປັນທາງຄູ ແລະ ນັກຈັດລາຍວິທະຍຸຊຸມຊົນໃນນາມອາສາສະໝັກ, ນາງ ພັນ ດຳເນີນລາຍການວິທະຍຸເປັນພາສາມະກ່ອງ ທີ່ມີຊື່ວ່າ 'ການຮຽນຮູ້ໃນວັນໃໝ່', ເຊິ່ງລາວຈະລາຍງານຂ່າວສານກ່ຽວກັບໂອກາດທາງດ້ານການສຶກສາຕ່າງໆຢູ່ໃນທ້ອງຖິ່ນ. ນາງ ພັນ ໄດ້ຮັບການສະໜັບສະໜູນ ໂດຍການເປັນສ່ວນໜຶ່ງຂອງໂຄງການໜຶ່ງປີ ເຊິ່ງມີຊື່ວ່າ 'ການສະໜັບສະໜູນການສຶກສາຂອງເດັກຍິງ ແລະ ແມ່ຍິງ ໃນການຟື້ນຟູຈາກພະຍາດໂຄວິດ-19 ໂດຍຜ່ານວິທະຍຸຊຸມຊົນ ຢູ່ປະເທດລາວ', ເຊິ່ງແມ່ນການຮ່ວມມືກັນລະຫວ່າງອົງການ UNESCO ແລະ UNDP, ກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ, ແລະ ກະຊວງສຶກສາທິການ ແລະ ກິລາ.

ນາງ ພັນ ແມ່ນໜຶ່ງໃນຈຳນວນແມ່ຍິງ 30 ຄົນ ທີ່ເປັນອາສາສະໝັກ ແລະ ເຮັດວຽກ ຢູ່ສະຖານີວິທະຍຸຊຸມຊົນ ໂດຍໄດ້ຮັບການສະໜັບສະໜູນພາຍໃຕ້ໂຄງການດັ່ງກ່າວ ຢູ່ເມືອງນາກາຍ ແຂວງຄຳມ່ວນ, ເມືອງຮຸນ ແຂວງອຸດົມໄຊ, ແລະ ເມືອງຕະໂອ້ຍ ແຂວງສາລະວັນ.

**ຜົນກະທົບທາງດ້ານບົດບາດຍິງ-ຊາຍ ແລະ ຜົນກະທົບຈາກພະຍາດໂຄວິດ-19**

ຜົນກະທົບທາງດ້ານສັງຄົມທີ່ກ່ຽວຂ້ອງກັບພະຍາດໂຄວິດ-19 ແມ່ນມີທາງດ້ານບົດບາດຍິງ-ຊາຍ ເຊິ່ງຖືກຮັບຮູ້ໄດ້ຢູ່ໃນຫຼາຍດ້ານຂອງຊີວິດ. ແມ້ນກະທັ້ງກ່ອນການລະບາດຂອງພະຍາດໂຄວິດ-19, ບັນທັດຖານ ບົດບາດຍິງ-ຊາຍໄດ້ສົ່ງຜົນກະທົບຕໍ່ກັບຄວາມສາມາດຂອງເດັກຍິງ ໃນການເຂົ້າເຖິງການສຶກສາ ແລະ ການເຂົ້າຮ່ວມໃນການຮຽນຮູ້. ຢູ່ເມືອງຕະໂອ້ຍ, ອາສາສະໝັກວິທະຍຸຊຸມຊົນ ນາງ ສີສະຫວາດ ອາຍຸ 32 ປີ ໄດ້ແບ່ງປັນຄວາມຄິດເຫັນຂອງລາວກ່ຽວກັບ ຜົນກະທົບທີ່ອາດຈະເກີດຂຶ້ນ ຈາກທັດສະນະຂອງພໍ່ແມ່ ຕໍ່ກັບການສຶກສາ ທາງດ້ານການຮຽນຮູ້ຂອງລູກສາວຂອງພວກເຂົາ:

"ພໍ່ແມ່ຫຼາຍຄົນບໍ່ຕ້ອງການສົ່ງລູກສາວໃຫ້ເຂົ້າໂຮງຮຽນ ເຊິ່ງສາມາດເກີດຂຶ້ນໄດ້ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ. ຕົວຢ່າງ ຢູ່ບ້ານຂອງຂ້າພະເຈົ້າ ພໍ່ແມ່ໄດ້ລົງທຶນໃສ່ການສຶກສາສໍາລັບລູກຂອງພວກເຂົາ ແຕ່ວ່າ ຫຼັງຮຽນຈົບ ລູກຂອງພວກເຂົາບໍ່ໄດ້ເຮັດວຽກ ແລະ ໄດ້ກັບຄືນມາຊ່ວຍຄອບຄົວເຮັດກະສິກໍາ. ພໍ່ແມ່ສ່ວນໃຫຍ່ເລີຍມັກຄິດວ່າ ການສຶກສາ ເປັນການລົງທຶນທີ່ບໍ່ໃຫ້ຜົນກໍາໄລ ເຊິ່ງພວກເຂົາພິຈາລະນາວ່າ ອາດຈະບໍ່ຄຸ້ມຄ່າກັບເງິນຄໍາທີ່ລົງທຶນໄປ"

ນາງ ສີສະຫວາດ ໄດ້ເວົ້າຕື່ມວ່າ ລາວຢາກໃຫ້ພໍ່ແມ່ທຸກຄົນຮັບຮູ້ຄວາມສໍາຄັນພື້ນຖານຂອງການສຶກສາ ຕໍ່ກັບລູກຂອງພວກເຂົາ, ທັງລູກສາວ ແລະ ລູກຊາຍ:

"ທຸກໆຄົນຄວນເຂົ້າໃຈຕໍ່ກັບຄວາມສໍາຄັນຂອງການສຶກສາ ເພາະວ່າ ການສຶກສາ ແມ່ນສໍາລັບໝົດທຸກຄົນ ບໍ່ວ່າຈະຮັ່ງມີ ຫຼື ທຸກຈົນ; ການສຶກສາ ຈະເປັນຂະບວນການທີ່ສໍາຄັນ ໃນການສ້າງຜູ້ນໍາໃນອະນາຄົດສໍາລັບປະເທດຂອງພວກເຮົາ"

ພາຍໃຕ້ໂຄງການດັ່ງກ່າວ, ບັນດາອາສາສະໝັກໄດ້ຕັ້ງເປົ້າໝາຍໃນການກໍານົດອຸປະສັກປະເພດຕ່າງໆ ທີ່ເດັກຍິງ ແລະ ແມ່ຍິງໄດ້ພົບພໍ້ໃນການເຂົ້າເຖິງການສຶກສາ ລວມທັງອຸປະສັກທີ່ມີຜົນມາຈາກບັນທັດຖານ ບົດບາດຍິງ-ຊາຍ, ວັດທະນະທໍາ ຫຼື ສັງຄົມ ທີ່ເປັນອັນຕະລາຍ. ໃນກອງປະຊຸມຝຶກອົບຮົມທີ່ໃຊ້ເວລາ 5 ມື້ ໃນເດືອນທັນວາ ທີ່ອໍານວຍຄວາມສະດວກໂດຍອົງການແພລນ ສາກົນ, ບັນດາອາສາສະໝັກໄດ້ສະທ້ອນໃຫ້ເຫັນກ່ຽວກັບ ປະສົບການຂອງພວກເຂົາເອງໃນບ້ານຂອງພວກເຂົາ. ບັນທັດຖານທາງດ້ານສັງຄົມທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍ ແລະ ອໍານາດ ໄດ້ຖືກຄົ້ນຄວ້າ ໂດຍສະເພາະແມ່ນຜົນກະທົບຈາກບັນທັດຖານເຫຼົ່ານີ້ຕໍ່ກັບການສຶກສາ ແລະ ໂອກາດທີ່ກ່ຽວຂ້ອງທີ່ມີຢູ່ສໍາລັບເດັກຍິງ ແລະ ແມ່ຍິງ.

ດັ່ງທີ່ ນາງ ໄພຖະໜອມ, ອາສາສະໝັກວິທະຍຸຊຸມຊົນ ອາຍຸ 33 ປີ ຈາກເມືອງຮຸນ ຈາກຊົນເຜົ່າຂະມຸ ໄດ້ກ່າວວ່າ:

"ບາງຄົນຍັງເຊື່ອວ່າ ແມ່ຍິງບໍ່ມີເງື່ອນໄຂທີ່ຈະເປັນຜູ້ນໍາໃນລະດັບຜູ້ບໍລິຫານ. ແຕ່ຂ້າພະເຈົ້າຄິດວ່າ ແມ່ຍິງມີຄວາມສາມາດຫຼາຍຢ່າງ ແລະ ມີທ່າແຮງທີ່ຈະເປັນຜູ້ນໍາ. ດັ່ງທີ່ພວກເຮົາໄດ້ເຫັນຈາກຫຼາຍຕົວຢ່າງ, ແມ່ຍິງສາມາດເປັນຫົວໜ້າຫ້ອງ ແລະ ສາມາດເປັນນາຍບ້ານ... ຂ້ອຍຕ້ອງການທີ່ຈະຊຸກຍູ້ໃຫ້ແມ່ຍິງທຸກຄົນ ເປີດຮັບເອົາໂອກາດຕ່າງໆໃຫ້ຕົນເອງ ໂດຍຜ່ານການສຶກສາ"

**ການປ່ຽນແປງບັນທັດຖານ ແລະ ທັດສະນະ ໂດຍຜ່ານການສົນທະນາຜ່ານທາງວິທະຍຸຊຸມຊົນ**

ເຖິງແມ່ນວ່າ ບັນທັດຖານທາງດ້ານສັງຄົມ ແລະ ທັດສະນະທີ່ຝັງແໜ້ນຢູ່ໃນສັງຄົມ ຈະເປັນອຸປະສັກຕໍ່ກັບການສຶກສາຂອງເດັກຍິງ, ໂດຍຜ່ານການສົນທະນາ ແລະ ການປູກຈິດສໍານຶກພາຍໃນບ້ານ ແລະ ຊຸມຊົນ, ສິ່ງເຫຼົ່ານີ້ ແມ່ນສາມາດປ່ຽນແປງໄດ້. ດັ່ງທີ່ ນາງ ໄພຖະໜອມ ໄດ້ສັງເກດວ່າ: 'ການປ່ຽນແປງບັນທັດຖານ ແມ່ນມີຄວາມເປັນໄປໄດ້ ໂດຍການເລີ່ມຈາກການປ່ຽນແປງທັດສະນະຂອງພວກເຮົາ', ແລະ ການປ່ຽນແປງທັດສະນະເຫຼົ່ານີ້ ແມ່ນເກີດຂຶ້ນແລ້ວ ຕາມທີ່ລາວໄດ້ເຫັນການເປັນຕົວແທນຂອງແມ່ຍິງ ທີ່ເພີ່ມຂຶ້ນຢູ່ໃນໂຮງຮຽນຕ່າງໆ ແລະ ຊຸມຊົນຂອງລາວ.

ໃນຕອນທ້າຍຂອງກອງປະຊຸມຝຶກອົບຮົມ, ລາວໄດ້ມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບ 'ຮາກຖານຂອງບັນທັດຖານທາງດ້ານສັງຄົມ, ພວກເຮົາຈະປ່ຽນແປງດ້ວຍວິທີໃດ, ແລະ ໃຜເປັນຜູ້ຮັບຜິດຊອບຕໍ່ກັບການປ່ຽນແປງນີ້'.

ກັບໄປທີ່ເມືອງຕະໂອ້ຍ, ນາງ ສີສະຫວາດ ແລະ ຜູ້ເຂົ້າຮ່ວມໂຄງການວິທະຍຸຊຸມຊົນຂອງລາວ ກຳລັງຝຶກຝົນທັກສະຕ່າງໆ ທີ່ໄດ້ຮັບການປັບປຸງໂດຍຜ່ານໂຄງການດັ່ງກ່າວ, ໂດຍສະເພາະແມ່ນການຜະລິດລາຍການ ແລະ ການສຸມໃສ່ການສະແດງຕ່າງໆ ທີ່ມີເປົ້າໝາຍໃນການແກ້ໄຂບັນທັດຖານທີ່ເປັນອັນຕະລາຍເຫຼົ່ານີ້. ໂດຍຜ່ານໂຄງການດັ່ງກ່າວ ແລະ ກອງປະຊຸມຝຶກອົບຮົມທີ່ໃຊ້ເວລາ 5 ມື້ ທີ່ອຳນວຍຄວາມສະດວກໂດຍ ວິສາຫະກິດເພື່ອສັງຄົມທີ່ນຳພາໂດຍຊາວໜຸ່ມ ສະເຕວລາ, ບັນດາອາສະໝັກວິທະຍຸຊຸມຊົນໄດ້ຮັບຄວາມຮູ້ກ່ຽວກັບບັນທັດຖານທາງດ້ານສັງຄົມ ແລະ ໄດ້ຝຶກຝົນວິທີການຈັດຮູບແບບຂໍ້ຄວາມທີ່ສຳຄັນໃນການອອກອາກາດຜ່ານທາງວິທະຍຸ. ກອງປະຊຸມຝຶກອົບຮົມດັ່ງກ່າວ ໄດ້ມີເປົ້າໝາຍທີ່ຈະຊຸກຍູ້ການສຶກສາໃຫ້ມີຄວາມເທົ່າທຽມຫຼາຍຂຶ້ນລະຫວ່າງຍິງ-ຊາຍ ໂດຍຜ່ານຜະລິດຕະພັນຕ່າງໆທາງວິທະຍຸ ເຊິ່ງລວມມີ ການສຳພາດ, ສຽງສຳພາດປະຊາຊົນ, ການສົນທະນາເປັນຄະນະ, ການໂຕ້ວາທີ, ການສະແດງລະຄອນ, ແລະ ການເລົ່າເລື່ອງ.

**ການສົ່ງເສີມການສຶກສາຂອງເດັກຍິງ ແມ່ນເປັນການສະໜັບສະໜູນການຟື້ນຟູຈາກພະຍາດໂຄວິດ-19 ໃຫ້ມີຄວາມຍືນຍົງ**

ເນື່ອງຈາກວ່າຫຼາຍປະເທດກຳລັງວາງແຜນຟື້ນຟູເສດຖະກິດຂອງພວກເຂົາ ຈາກການລະບາດຂອງພະຍາດໂຄວິດ-19, ພວກເຂົາຄວນຄຳນຶງເຖິງການລົງທຶນທີ່ສຳຄັນ ແລະ ຜົນຕອບແທນຈາກການສຶກສາຂອງເດັກຍິງ. ຊຸມຊົນຄວນໄດ້ຮັບການຢ້ຳເຕືອນວ່າ ຈຳນວນເດັກຍິງທີ່ໜ້ອຍລົງຢູ່ໃນຫ້ອງຮຽນ ກໍໝາຍເຖິງຈຳນວນແມ່ຍິງທີ່ສາມາດປະກອບສ່ວນທີ່ມີຄຸນຄ່າຕໍ່ສັງຄົມ ທາງເສດຖະກິດ ແລະ ສັງຄົມໜ້ອຍລົງ. ເມື່ອເດັກຍິງມີຄວາມເກັ່ງກ້າສາມາດໃນດ້ານການສຶກສາຂອງພວກເຂົາ, ສັງຄົມໂດຍລວມກໍຈະມີຄວາມຈະເລີນຮຸ່ງເຮືອງ; ຕາມຄວາມຈິງແລ້ວ, ການລົງທຶນໃສ່ການສຶກສາຂອງເດັກຍິງ ແມ່ນມີຄວາມເຊື່ອມໂຍງກັບ ການຫຼຸດລົງຂອງ ຈຳນວນການແຕ່ງດອງໃນໄວເດັກ, ການຖືພາໃນໄວເດັກ, ການຕາຍຂອງແມ່ ແລະ ເດັກ, ແລະ ການຂາດສານອາຫານຂອງເດັກ.

ຢູ່ ສປປ ລາວ, ວິທະຍຸຊຸມຊົນ ກຳລັງມີບົດບາດທີ່ສຳຄັນ ໃນການເລີ່ມຕົ້ນການສົນທະນາໃນລະດັບຊຸມຊົນ ກ່ຽວກັບບົດບາດຍິງ-ຊາຍ, ອຳນາດ, ແລະ ຄວາມສະເໝີພາບ. ວິທະຍຸຊຸມຊົນ ກຳລັງເຮັດວຽກ ເພື່ອຂະຫຍາຍສຽງຂອງເດັກຍິງ ແລະ ແມ່ຍິງ ເຊິ່ງເປັນຜູ້ທີ່ສະໜັບສະໜູນສິດທິຂອງພວກເຂົາໃນເຂົ້າເຖິງການສຶກສາຢ່າງເປີດເຜີຍ ແລະ ສະໜັບສະໜູນການຟື້ນຟູຈາກການລະບາດຂອງພະຍາດໂຄວິດ-19 ໃຫ້ມີຄວາມຍືນຍົງ. ລາຍການວິທະຍຸທີ່ນຳພາໂດຍແມ່ຍິງ ເຊິ່ງເຜີຍແຜ່ຂໍ້ຄວາມຕ່າງໆ ກ່ຽວກັບຄວາມສຳຄັນຂອງການສຶກສາຂອງເດັກຍິງ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແມ່ນມີອິດທິພົນຕໍ່ກັບທັດສະນະຂອງຄອບຄົວ ແລະ ຊຸມຊົນໃນທາງບວກ ກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ. ນາງ ພັນ, ໄພຖະໜອມ ແລະ ສີສະຫວາດ ເປັນຕົວຢ່າງຂອງຜູ້ນຳທີ່ເປັນໄວໜຸ່ມຍິງ ທີ່ກຳລັງປູທາງສູ່ການເປັນຜູ້ສະໜັບສະໜູນການສຶກສາຂອງເດັກຍິງ ແລະ ແມ່ຍິງ ຢູ່ໃນຊຸມຊົນຂອງພວກເຂົາ.

ພວກເຮົາຕ້ອງສືບຕໍ່ຮັກສາເດັກຍິງໃຫ້ຢູ່ ‘ໃນຮູບພາບ’ ໃນແຜນຟື້ນຟູຈາກພະຍາດໂຄວິດ-19 ໂດຍການຮັບປະກັນວ່າ ເດັກຍິງທຸກຄົນມີໂອກາດໃນການຮຽນຮູ້ ເພາະ #ການຮຽນຮູ້ບໍ່ວັນສິ້ນສຸດ.

*ບົດຄວາມນີ້ຖືກຂຽນຂຶ້ນໂດຍ: Jenelle Babb, ທີ່ປຶກສາພາກພື້ນ ດ້ານການສຶກສາ ເພື່ອສຸຂະພາບ ແລະ ຊີວິດການເປັນຢູ່ທີ່ດີ, ພະແນກການສຶກສາທີ່ມີຄຸນນະພາບແບບກວມລວມ, ສຳນັກງານພາກພື້ນອາຊີ ແລະ ປາຊີຟິກ ເພື່ອການສຶກສາ, ອົງການ UNESCO ປະຈຳ Bangkok. ແລະ Seán O'Connell, ຜູ້ນຳທີມດ້ານການປົກຄອງ, ຜູ້ຊ່ວຍຜູ້ຕາງໜ້າ, ອົງການສະຫະປະຊາຊາດ ເພື່ອການພັດທະນາ, ປະຈຳ ລາວ.*